ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມາທິການແຫ່ງຊາດ

ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ

ເລກທີ 051 /ຄຊກມດ

ນະຄອນຫລວງວຽງຈັນ, ວັນທີ 24 ມີນາ 2023

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງໜ້າທີ່ນຳພາ-ຊີ້ນຳວຽກງານ ຂອງ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ສະບັບເລກທີ 19 /ນຍ, ລົງວັນທີ 25 ມັງກອນ 2023.
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍການແຕ່ງຕັ້ງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ສະບັບເລກທີ 45/ນຍ, ລົງວັນທີ 22 ມີນາ 2023;
- ອີງຕາມ ຜົນຂອງກອງປະຊຸມຄົບຄະນະເປີດກວ້າງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ວັນທີ 20 ມິຖຸນາ 2022.

ເພື່ອຮັບປະກັນໃຫ້ການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ມີປະສິດທິພາບ ແລະ ປະສິດທິຜົນສູງ.

### ຮອງນາຍົກລັດຖະມົນຕີ ປະທານຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ຕົກລົງ:

**ມາດຕາ 1:** ແບ່ງໜ້າທີ່ຮັບຜິດຊອບ ແລະ ຊີ້ນຳວຽກງານຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ລາຍລະອຽດດັ່ງນີ້:

1) ທ່ານ ສຈ.ປອ. ກິແກ້ວ ໄຂຄຳພິທູນ **ຮອງນາຍົກລັດຖະມົນຕີ, ປະທານ ຄຊກມດ** ຮັບຜິດຊອບ:
   - ຊີ້ນຳລວມວຽກງານຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ;
   - ຮັບຜິດຊອບຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບການເຄື່ອນໄຫວວຽກງານຂອງ ຄຊກມດ;
   - ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມາທິການເພື່ອຄວາມກ້າວໜ້າແມ່ຍິງຂັ້ນຂະແໜງການ ແລະ ທ້ອງຖິ່ນ ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ;

- ອອກຂໍ້ຕົກລົງແຕ່ງຕັ້ງ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ເຂົ້າຮ່ວມກອງປະຊຸມ ຢູ່ ພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຄວາມສະເໝີພາບຍິງ-ຊາຍ ແລະ ວຽກແມ່ ແລະ ເດັກ ແລະ ວຽກງານຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;
- ພິຈາລະນາ ແລະ ລົງລາຍເຊັນ ບັນດານິຕິກຳ ໃນການຈັດຕັ້ງຜັນຂະຫຍາຍວຽກຄວາມກ້າວໜ້າຂອງ ແມ່ຍິງ, ແມ່ ແລະ ເດັກ.

**2) ທ່ານ ດຣ. ນາງ ອິນລາວັນ ແກ້ວບຸນພັນ ປະທານ ສສຍລ, ຮອງປະທານ ຜູ້ປະຈຳການ ຄຊກມດ ຮັບຜິດຊອບ:**

- ເປັນຜູ້ຊ່ວຍປະທານ ຄຊກມດ ຕາມການມອບໝາຍ;
- ສະເໜີ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ແລະ ຍ້ອງຍໍ ຂັ້ນຫົວໜ້າ, ຮອງຫົວໜ້າຫ້ອງການ, ພະແນກ ແລະ ພະນັກງານຫ້ອງການ ຄຊກມດ;
- ປະສານງານ ແລະ ນຳພາ-ຊີ້ນຳ ວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ ກັບ ບັນດາ ຄກມດ ທ້ອງຖິ່ນ;
- ຊີ້ນຳລົງເລິກໂດຍກົງກັບບັນດາຂະແໜງການ ແລະ ພາກສ່ວນອື່ນໃນວຽກງານປົກປ້ອງ, ຊ່ວຍເຫຼືອ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

**3) ທ່ານ ນາງ ທິບພະກອນ ຈັນທະວົງສາ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ປະທານ ຄກມດ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ , ຮອງປະທານ ຄຊກມດ ຮັບຜິດຊອບ:**

- ເປັນເຈົ້າການໃນການປະສານງານລະຫວ່າງ ສຳນັກງານນາຍົກລັດຖະມົນຕີ ແລະ ຄຊກມດ ກ່ຽວກັບ ການປະຕິບັດວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ ກັບບັນດາ ຄກມດ ກະຊວງ, ອົງການ ແລະ ທ້ອງຖິ່ນ;
- ຮຽບຮຽງບັນດາເອກະສານ ກ່ຽວກັບວຽກງານຄວາມສະເໝີພາບຍິງ-ຊາຍ ແລະ ວຽກງານແມ່ ແລະ ເດັກ ທີ່ຈະສະເໜີລັດຖະບານເພື່ອພິຈາລະນາ;
- ນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຄວາມສະເໝີພາບຍິງ-ຊາຍ, ແມ່ ແລະ ເດັກ, ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ຕິດພັນກັບຄວາມຮັບຜິດຊອບ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

**4) ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີກະຊວງ ແຜນການ ແລະ ການລົງທຶນ, ຮອງປະທານ ຄຊກມດ ຮັບຜິດຊອບ:**

- ນຳພາ-ຊີ້ນຳ ການເຊື່ອມສານວຽກງານຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການ ລຶບລ້າງທຸກຮູບການຈຳແນກ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ສິດທິເດັກ, ການ ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດ ລວມທັງການສະຫຼຸບລາຍງານ ແຕ່ລະໄລຍະ;
- ຊີ້ນຳ ການສຳຫຼວດ ແລະ ສຶກສາຄົ້ນຄ້ວາລະດັບຊາດໃນຫົວຂໍ້ຕ່າງໆ ທີ່ຕິດພັນກັບວຽກ ຄຊກມດ ລວມ ທັງການເຊື່ອມເອົາບັນດາຕົວຊີ້ວັດກ່ຽວກັບຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບການຈຳແນກ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ສິດທິເດັກ, ການປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ ເຂົ້າໃນບົດສຳຫຼວດ ແລະ ສຶກສາຕ່າງໆ ຂອງ ລັດຖະບານໃນແຕ່ລະຄັ້ງ;
- ປະສານງານ ແລະ ນຳພາ-ຊີ້ນຳ ວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກໃນຂົງເຂດ ເສດຖະກິດ;

- ພົວພັນຮ່ວມມື ກັບບັນດາອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ, ບັນດາປະເທດເພື່ອນມິດ, **ພາກພື້ນ** ແລະ ສາກົນ ໃນການຂົນຂວາຍເອົາການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ວິຊາການ ເຂົ້າໃນ**ການ**ຈັດຕັ້ງປະຕິບັດວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານ ແມ່ ແລະ ເດັກ;
- ນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ, ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ຕິດພັນກັບຄວາມຮັບຜິດຊອບຂອງ ກະຊວງແຜນການ ແລະ ການລົງທຶນ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

5) **ທ່ານ ປອ. ນາງ ຈັນໂສດາ ພອນທິບ ຮອງປະທານ ສູນກາງສະຫະພັນແມ່ຍິງລາວ, ຮອງປະທານ ຄຊກມດ** ຮັບຜິດຊອບ:

- ນຳພາ-ຊີ້ນຳ ການຄົ້ນຄ້ວາຮ່າງນະໂຍບາຍ, ຍຸດທະສາດ, ນິຕິກຳ, ແຜນດຳເນີນງານແຫ່ງຊາດ ກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ, ລວມທັງການຕິດຕາມຊຸກຍູ້, ສະຫຼຸບລາຍງານການຈັດຕັ້ງປະຕິບັດ;
- ປະສານງານລະຫວ່າງ ສະພາແຫ່ງຊາດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ອົງການຈັດຕັ້ງມະຫາຊົນ ກ່ຽວກັບວຽກງານຄວາມສະເໝີພາບຍິງ-ຊາຍ, ແມ່ ແລະ ເດັກ;
- ຊຸກຍູ້, ຕິດຕາມກວດກາ, ປະເມີນຜົນ, ສະຫຼຸບລາຍງານ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານຂອງ ຄຊກມດ;
- ນຳພາ-ຊີ້ນຳ ການພົວພັນຮ່ວມມື ຂໍການສະໜັບສະໜູນກັບບັນດາອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ, ບັນດາປະເທດເພື່ອນມິດ, ພາກພື້ນ ແລະ ສາກົນ ກ່ຽວກັບການຈັດຕັ້ງປະຕິບັດວຽກຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ;
- ຊີ້ນຳ ວຽກງານປົກກະຕິຂອງຫ້ອງການ ຄຊກມດ;
- ນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ, ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກທີ່ຕິດພັນກັບຄວາມຮັບຜິດຊອບ ຂອງສູນກາງສະຫະພັນແມ່ຍິງລາວ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

6) **ທ່ານ ນາງ ລີອົງ ລາວລີ ຮອງລັດຖະມົນຕີ ກະຊວງພາຍໃນ, ຮອງປະທານ** ຄຊກມດ ຮັບຜິດຊອບ:

- ນຳພາ-ຊີ້ນຳ ປັບປຸງເອກະສານທີ່ກ່ຽວກັບນິຕິກຳການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄຊກມດ ທີ່ຈະສະເໜີຕໍ່ລັດຖະບານພິຈາລະນາ;
- ຊີ້ນຳ, ຕິດຕາມການຈັດຕັ້ງປະຕິບັດວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານ ແມ່ ແລະ ເດັກ ຂອງ ຄກມດ ກະຊວງ, ອົງການ ຂັ້ນເຂດວັດທະນະທຳ-ສັງຄົມ ແລະ ອົງການຈັດຕັ້ງທາງສັງຄົມ;
- ຊີ້ນຳ, ຕິດຕາມບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ຈັດຕັ້ງທາງສັງຄົມ ໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ ແລະ ວຽກແມ່ ແລະ ເດັກ;
- ນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ, ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກທີ່ຕິດພັນກັບຄວາມຮັບຜິດຊອບ ຂອງກະຊວງພາຍໃນ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

7) **ທ່ານ ບຸນທາ ຊົງເຢີທ່າວ ຮອງລັດຖະມົນຕີ ກະຊວງ ຍຸຕິທຳ, ຮອງປະທານ ຄຊກມດ** ຮັບຜິດຊອບ:

- ຊີ້ນຳ ການເຊື່ອມສານວຽກງານຄວາມສະເໝີພາບຍິງ-ຊາຍ ເຂົ້າໃນບັນດາກົດໝາຍ ແລະ ນິຕິກຳຕ່າງໆ ເພື່ອໃຫ້ສອດຄ່ອງກັບສົນທິສັນຍາສັນຍາ, ອະນຸສັນຍາ, ຖະແຫຼງການ ສປປ ລາວ ເປັນພາຄີ;

- ຊຸກຍູ້, ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ ແລະ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ແລະ ບັນດານິຕິກຳໃຕ້ກົດໝາຍ ກ່ຽວການສົ່ງເສີມຄວາມກ້າວໜ້າແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບການຈຳແນກ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ສິດທິເດັກ, ການປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ;
- ປະສານງານ, ຊີ້ນຳວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ ໃນຂົງເຂດຍຸຕິທຳ.
- ຊີ້ນຳ ການໂຄສະນາເຜີຍແຜ່ກົດໝາຍ ນິຕິກຳ ແລະ ລະບຽບການໃນການຈັດຕັ້ງຄວາມສະເໝີພາບຍິງ-ຊາຍ, ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ;
- ຊີ້ນຳ ຊຸກຍູ້ ການຈັດຕັ້ງປະຕິບັດມາດຕະຖານການຊ່ວຍເຫຼືອ ດ້ານຍຸຕິທຳສຳລັບແມ່ຍິງທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ;
- ນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ ແລະ ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ຕິດພັນກັບຄວາມຮັບຜິດຊອບ ຂອງ ກະຊວງຍຸຕິທຳ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

8) ທ່ານ ທອງຜ່ານ ສະຫວັນເພັດ ຮອງລັດຖະມົນຕີ **ກະຊວງການຕ່າງປະເທດ ຮອງປະທານ ຄຊກມດ** ຮັບຜິດຊອບ:

- ນຳພາ-ຊີ້ນຳ ການຄົ້ນຄວ້າ, ສະເໜີພິຈາລະນາຮັບຮອງ, ໃຫ້ສັດຕະຍາບັນ, ເຂົ້າເປັນພາຄີ ຫຼື ຍົກເລີກສົນທິສັນຍາ, ສັນຍາ, ອານຸສັນຍາ, ຖະແຫຼງການ ແລະ ເອກະສານອື່ນໆຂອງອາຊຽນ, ພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງກັບວຽກງານຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບການຈຳແນກ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ສິດທິເດັກ, ການປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ;
- ນຳພາ-ຊີ້ນຳ ການຂຽນບົດລາຍງານແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ, ສັນຍາ, ອານຸສັນຍາ, ຖະແຫຼງການ ແລະ ເອກະສານອື່ນໆ ຂອງອາຊຽນ, ພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບການຈຳແນກ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ສິດທິເດັກ, ການປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ;
- ພົວພັນຮ່ວມມືຂໍການສະໜັບສະໜູນກັບບັນດາອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ, ປະເທດເພື່ອນມິດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ ໃນຂົງເຂດຄວາມຮັບຜິດຊອບຂອງກະຊວງການຕ່າງປະເທດ;
- ນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ ແລະ ວຽກງານຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ຕິດພັນກັບຄວາມຮັບຜິດຊອບ ຂອງ ກະຊວງການຕ່າງປະເທດ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

9) ທ່ານ ດຣ. ໄພວັນ ແກ້ວປະເສີດ ຮອງລັດຖະມົນຕີ **ກະຊວງສາທາລະນະສຸກ**, ຮອງປະທານ ຄຊກມດ ຮັບຜິດຊອບ:

- ຊີ້ນຳ ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກຄວາມສະເໝີພາບຍິງ-ຊາຍ ແລະ ວຽກແມ່ ແລະ ເດັກ ເພື່ອເຊື່ອມເຂົ້າໃນແຜນພັດທະນາຂອງກະຊວງສາທາລະນະສຸກ ໃນແຕ່ລະໄລຍະ;
- ນຳພາ-ຊີ້ນຳ ຈັດຕັ້ງປະຕິບັດຕົວຊີ້ບອກຄວາມສະເໝີພາບຍິງ-ຊາຍ ທີ່ຕິດພັນກັບດ້ານສຸຂະພາບ;

- ຊີ້ນຳ ການຈັດຕັ້ງປະຕິບັດການບໍລິການດ້ານສຸຂະພາບສຳລັບແມ່ຍິງ ແລະ ເດັກທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ;
- ນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຄວາມສະເໝີພາບຍິງ-ຊາຍ, ວຽກງານແມ່ ແລະ ເດັກ ແລະ ວຽກງານຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ຕິດພັນກັບຄວາມຮັບຜິດຊອບ ຂອງກະຊວງສາທາລະນະສຸກ;
- ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

ມາດຕາ 2: ໜ້າທີ່ຂອງບັນດາກຳມະການ ຂອງ ຄຊກມດ

ບັນດາທ່ານໃນກຳມະການຂອງ ຄຊກມດ ມີໜ້າທີ່ ປະກອບສ່ວນເຂົ້າໃນການປະຕິບັດວຽກງານຂອງ ຄຊກມດ ໂດຍການນຳເອົາມະຕິຕົກລົງ ແລະ ແຜນການຕ່າງໆ ຂອງ ຄຊກມດ ລວມທັງບັນດາເນື້ອໃນຂອງສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງຂອງອາຊຽນ, ພາກພື້ນ ແລະ ສາກົນ ທີ່ຕິດພັນກັບວຽກຄວາມສະເໝີພາບຍິງ-ຊາຍ, ແມ່ ແລະ ເດັກ ແລະ ຊີ້ນຳໂດຍກົງ ວຽກຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໄປຈັດຕັ້ງຜັນຂະ ຫຍາຍເຂົ້າໃນແຜນຍຸດທະສາດ, ແຜນການຂອງຂະແໜງການຕົນ ລວມທັງສະຫຼຸບລາຍງານໃຫ້ ຄຊກມດ ແຕ່ລະໄລຍະ.

ມາດຕາ 3: ແບບແຜນວິທີເຮັດວຽກ

1. ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ປະຕິບັດລະບອບແບບແຜນວິທີເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ;
2. ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ຖືເອົາແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ, ແຜນດຳເນີນງານແຫ່ງຊາດເພື່ອແມ່ ແລະ ເດັກ ແລະ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ເປັນເນື້ອໃນເຄື່ອນໄຫວຕົ້ນຕໍ;
3. ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ຖືເອົາລະບອບປະຊຸມ 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ເພື່ອເປັນການຕິດຕາມຊຸກຍູ້, ກວດກາ, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ ແລະ ວາງແຜນທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ ພ້ອມທັງລາຍງານເປັນປົກກະຕິໃຫ້ແກ່ລັດຖະບານ; ໃນກໍລະນີຈຳເປັນ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ສາມາດເປີດກອງປະຊຸມວິສາມັນຂຶ້ນ ເພື່ອປຶກສາບັນຫາຮີບດ່ວນ;
4. ປະທານ ແລະ ບັນດາຮອງປະທານ ຖືເອົາລະບອບປະຊຸມປະຈຳໄຕມາດ ເພື່ອປຶກສາຫາລືວຽກງານ, ໃນກໍລະນີມີວຽກຮີບດ່ວນ; ປະທານ ຄຊກມດ ເປັນຜູ້ຮຽກປະຊຸມ.

ມາດຕາ 4 : ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງສະບັບເລກທີ 56/ນຍ ລົງວັນທີ 30 ມິຖຸນາ 2017.

ຮອງນາຍົກລັດຖະມົນຕີ

ປະທານ

ສຈ.ປອ. ກິແກ້ວ ໄຂຄຳພິທູນ